ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



ສຳນັກງານໃຫຍ່

ເລກທີ: 2606/ທຄຕລ 2024
ນະຄອນຫຼວງວຽງຈັນ, ວັນທີ: 31.07.2024

## ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາວຽກງານກໍ່ສ້າງກຳແພງສຳນັກງານ ທຄຕລ ສາຂາຈຳປາສັກ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາວຽກການກໍ່ສ້າງກຳແພງສຳນັກງານ ທຄຕລ ສາຂາຈຳປາສັກ ເຊິ່ງຕັ້ງຢູ່ ບ້ານພັດທະນາຫຼັກເມືອງ ເມືອງປາກເຊ ແຂວງ ຈຳປາສັກ ໂດຍມີເນື້ອໃນດັ່ງນີ້:

I. **ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:**

1) ເອກະສານດ້ານລາຄາໃບປະເມີນລາຄາລວມອາກອນມູນຄ່າເພີ່ມ 10% ຕ້ອງເປັນສະກຸນເງິນກີບ 1 ຊຸດ
2) ໜັງສືຄ້ຳປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທີ່ສະເໜີລາຄາທັງໝົດດ້ວຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 21/10/2024) ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ຫຼື ແຊັກດັ່ງກ່າວຄືນ. ສຳລັບຜູ້ຊະນະປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາ.
3) ໃບທະບຽນວິສາຫະກິດ
4) ໃບອະນຸຍາດດຳເນີນທຸລະກິດປີ 2023 ຫຼື 2024
5) ທຶນຈົດທະບຽນວິສາຫະກິດ 1 ຕື້ກີບຂຶ້ນໄປ
6) ໃບຢັ້ງຢືນການເສຍອາກອນປີ 2022 ຫຼື 2023
7) ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານທີ່ມີສີມືທາງດ້ານການກໍ່ສ້າງກຳແພງທະນາຄານ ຫຼື ສຳນັກງານຫ້ອງການຢ່າງໜ້ອຍ 3 ໂຄງການ
   - ວັນພຸດ, ວັນທີ 14/08/2024 ໃຫ້ບໍລິສັດສົ່ງຊອງເອກະສານດ້ານເຕັກນິກຂໍ້ 3)-07) ທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່.
   - ວັນພຸດ, ວັນທີ 21/08/2024, ເວລາ 09:00 ໂມງ ແມ່ນມື້ເປີດຊອງປະມູນລາຄາຊ່ອງໜ້າຄະນະກຳມະການ ທຄຕລ, ບໍລິສັດຜູ້ຮັບເໝົາຕ້ອງຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງປະມູນທີ່ຫ້ອງປະຊຸມຊັ້ນ 05 ຕຶກ C;
   - ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດກໍ່ສ້າງເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ.
8) ບໍລິສັດຕ້ອງລົງສຳຫຼວດເບິ່ງສະຖານທີ່ຕົວຈິງດ້ວຍຕົນເອງໃນການຄິດໄລ່ລາຍການໜ້າວຽກ ເພື່ອສະເໜີລາຄາ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

II. **ການພົວພັນ ແລະ ໄລຍະເວລາການຮັບເໝົາ**

1) ສາມາດສອບຖາມລາຍລະອຽດເພີ່ມເຕີມກ່ຽວກັບເຕັກນິກການຕົບແຕ່ງ ຫຼື ລົງສຳຫຼວດສະຖານທີ່ຕົບແຕ່ງ ຈາກວັນທີ 02/08/2024-16/08/2024, ໃນຊ່ວງເວລາ 08:30-11:30 ໂມງ ແລະ 13:30-16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆທັງໝົດ.
2) ບໍລິສັດສາມາດພົວພັນເອົາເອກະສານ ເລີ່ມແຕ່ວັນທີ 02/08/2024-16/08/2024, ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່.
3) ໄລຍະການຮັບເໝົາກໍ່ສ້າງບໍ່ເກີນ 6 ເດືອນ.

III. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ**:

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 2% ຄືນ.
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ, ຄ່າທຳນຽມຈົດທະບຽນສານ ແລະ ຈົດທະບຽນຊັບສິນຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຮັບເໝົາ.
3) ການຊຳລະແບ່ງອອກເປັນ 3 ງວດ:

**ງວດທີ 1** ຊຳລະ 50% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 50% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;

**ງວດທີ 2** ຊຳລະ 40% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 100% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;

**ງວດທີ 3** ຫັກເງິນຄ້ຳປະກັນຄຸນນະພາບໄວ້ 10% ຂອງມູນຄ່າທັງໝົດ ໄລຍະ 01 ປີ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ປະທານຄະນະກຳມະການ**
**ຈັດຊື້, ກໍ່ສ້າງ-ສ້ອມແປງ-ບໍລິການອື່ນໆ ທຄຕລ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

ຜູ້ປະສານງານ:

1) ທ່ານ ສອນນາລິນ ແສງມະນີ 02028227898
2) ທ່ານ ເພັດສະໝອນ ແສງຕະກຸນ 02077467722